**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງໄຊຍະບູລີ

ເລກທີ 1404/ຈຂ.ຊຍ

ໄຊຍະບູລີ, ວັນທີ 05.10.2023.

# ຂໍ້ຕົກລົງ

# ວ່າດ້ວຍການຄຸ້ມຄອງນ້ຳລິນ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ III ໝວດທີ 4 ມາດຕາ 20 ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫລວງ;
- ອີງຕາມ ກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017 ແລະ ສະບັບປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 21/ສພຊ, ລົງວັນທີ 7 ກໍລະກົດ 2022;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍການຄຸ້ມຄອງມາດຕະຖານຄຸນນະພາບນ້ຳດື່ມ-ນ້ຳໃຊ້ໃນຄົວເຮືອນ ສະບັບເລກທີ 561/ສທ ລົງວັນທີ 27 ກຸມພາ 2014;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 71/ສພຂ.ຊຍ, ລົງວັນທີ 28 ສິງຫາ 2023.

## ເຈົ້າແຂວງ ໄຊຍະບູລີ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ການຕິດຕາມກວດກາ ກ່ຽວກັບວຽກງານຄຸ້ມຄອງນ້ຳລິນ ເພື່ອເຮັດໃຫ້ການຄຸ້ມຄອງນຳໃຊ້ລະບົບນ້ຳລິນ ມີຄວາມສະອາດ, ປອດໄພ, ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ ແນໃສ່ຮັບປະກັນໃຫ້ແກ່ການບໍລິໂພກ, ອຸປະໂພກ ແລະ ເປົ້າໝາຍອື່ນໆຢ່າງທົ່ວເຖິງ ແລະ ພຽງພໍ, ຫຼຸດຜ່ອນຄວາມສ່ຽງຕໍ່ການເກີດພະຍາດທີ່ປົນມານຳນ້ຳ ເຮັດໃຫ້ປະຊາຊົນມີສຸຂະພາບແຂງແຮງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

**ມາດຕາ 2 ການຄຸ້ມຄອງນ້ຳລິນ**

ການຄຸ້ມຄອງນ້ຳລິນ ຂຽນຫຍໍ້ວ່າ “ຄນລ” ແມ່ນ ການປົກປັກຮັກສາ-ນຳໃຊ້ປ່າແຫຼ່ງນ້ຳ, ຫົວງານ, ລະບົບທໍ່ນ້ຳ, ອ່າງເກັບນ້ຳ, ສາຍກາບ, ກ໋ອກນ້ຳ ແລະ ອື່ນໆ ດ້ວຍການປະຕິບັດພັນທະ ແລະ ປະກອບສ່ວນຂອງພາກສ່ວນຕ່າງໆຂອງສັງຄົມ ເພື່ອເຮັດໃຫ້ລະບົບນ້ຳລິນສາມາດນຳໃຊ້ໄດ້ຢ່າງຍາວນານ ແລະ ມີຄຸນນະພາບ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລະບົບນໍ້າລິນ** ໝາຍເຖິງ ໜຶ່ງໃນລະບົບນໍ້າສະອາດ ທີ່ສະໜອງນໍ້າສະອາດຜ່ານລະບົບທໍ່ ສົ່ງໃຫ້ແກ່ຄົວເຮືອນໃນເຂດຊົນນະບົດ ຫຼື ຕົວເມືອງທີ່ໄດ້ຈາກນໍ້າໜ້າດິນ ແລະ ບໍ່ໄດ້ເຊື່ອມຕໍ່ກັບລະບົບນໍ້າປະປາ ໂດຍອາໄສແຮງດັນນໍ້າໄຫຼຜ່ານທໍ່ສົ່ງຈາກທີ່ສູງຫາທີ່ຕໍ່າມີຈຸດສະໜອງ ແລະ ຊົມໃຊ້ນໍ້າຕາມມາດຕະຖານຂອງລະບົບນໍ້າລິນ;

2. **ນໍ້າໜ້າດິນ** ໝາຍເຖິງ ນໍ້າທີ່ໄດ້ມາຈາກທໍາມະຊາດ ເຊັ່ນ: ນໍ້າຫ້ວຍ, ນໍ້າອອກບໍ່, ນໍ້າສ້າງຕື້ນແຄມຫ້ວຍ;

3. **ນໍ້າສະອາດ** ໝາຍເຖິງ ນໍ້າທີ່ໄດ້ມາຈາກທໍາມະຊາດ ເຊັ່ນ: ນໍ້າຝົນ, ນໍ້າໜ້າດິນ, ນໍ້າໃຕ້ດິນ ຊຶ່ງເປັນນໍ້າທີ່ໃສສະອາດ, ບໍ່ມີສີ, ບໍ່ມີກິ່ນ ແລະ ບໍ່ມີລົດຊາດ;

4. **ນໍ້າໃຕ້ດິນ** ໝາຍເຖິງ ນໍ້າທີ່ໄດ້ມາຈາກທໍາມະຊາດດ້ວຍວິທີການຕ່າງໆດ້ານເຕັກນິກການຈັດຫານໍ້າສະອາດເຊັ່ນ: ນໍ້າສ້າງ ແລະ ນໍ້າບາດານ;

5. **ການບໍາລຸງຮັກສາ** ໝາຍເຖິງ ລະບົບການຄຸ້ມຄອງ ຕິດຕາມກວດກາ, ປົກປັກຮັກສາ ແລະ ການເຮັດອະນາໄມລະບົບນໍ້າລິນເປັນແຕ່ລະໄລຍະ;

6. **ປ່າແຫຼ່ງນໍ້າ** ໝາຍເຖິງ ປ່າທີ່ມີຄວາມຊຸ່ມຊື່ນດ້ວຍຕົ້ນໄມ້ນາໆຊະນິດໃນທຸກລະດູການ ແລະ ເປັນປ່າແຫຼ່ງນໍ້າອອກບໍ່ ຫຼື ນໍ້າຫ້ວຍ ທີ່ໃສສະອາດ ປາສະຈາກສິ່ງປົນເປື້ອນຕ່າງໆ;

7. **ຫົວງານ** ໝາຍເຖິງ ຈຸດຕັນນໍ້າເປັນຝາຍນໍ້າລົ້ນ ຫຼື ນໍ້າອອກບໍ່ຈາກແຫຼ່ງນໍ້າທໍາມະຊາດເຂົ້າໃນທໍ່ສົ່ງນໍ້າໂດຍປະກອບດ້ວຍລະບົບຫ້ອງຕອງນໍ້າ ແລະ ອຸປະກອນປິດເປີດນໍ້າ, ສ້າງດ້ວຍເບຕົງເສີມເຫຼັກທີ່ແໜ້ນໜາ ແລະແຂງແຮງ;

8. **ລະບົບທໍ່ນໍ້າ** ໝາຍເຖິງ ທໍ່ລໍາລຽງນໍ້າຈາກຫົວງານຜ່ານລະບົບທໍ່ໄປຫາຈຸດຕ່າງໆ ແລະ ກ໊ອກນໍ້າສາທາລະນະ ຕ້ອງໄດ້ຝັງລົງພື້ນດິນ 50-70 ຊັງຕີແມັດ ຫຼື ຕ້ອງມີສາຍກາບເພື່ອຊ່ວຍເປັນແຮງຫ່ວງນໍ້າໜັກທໍ່ນໍ້າໃນກໍລະນີ ເອົາທໍ່ນໍ້າຂ້າມແມ່ນໍ້າ ຫຼື ເຂດເຫວເລິກຊັນ, ລະບົບທໍ່ນໍ້າລິນປະກອບມີ: ທໍ່ນໍ້າ, ສາຍກາບ, ທໍ່ລອດພື້ນຫ້ວຍ, ປະຕູລະບາຍຂີ້ຕົມ ຫຼື ຂີ້ເຫຍື້ອ ຫຼື ຕະກອນຕົກຄ້າງ, ປະຕູລະບາຍອາກາດ ແລະ ອື່ນໆ;

9. **ອ່າງເກັບນໍ້າ** ໝາຍເຖິງ ອ່າງທ້ອນໂຮມນໍ້າໃນລະບົບນໍ້າລິນ ສ້າງຕາມການຄິດໄລ່ປະລິມານຄວາມຕ້ອງການຊົມໃຊ້ນໍ້າປະກອບດ້ວຍ: ອ່າງທີ່ເຮັດດ້ວຍເບຕົງເສີມເຫຼັກ, ທໍ່ນໍ້າເຂົ້າ-ອອກ, ທໍ່ນໍ້າລົ້ນ-ລ້າງ;

10. **ກ໊ອກນໍ້າສາທາລະນະ** ໝາຍເຖິງ ຈຸດຊົມໃຊ້ນໍ້າທີ່ເປັນກ໊ອກສາທາລະນະພາຍໃນບ້ານປະກອບມີເສົາກ໊ອກ, ລານກ໊ອກ, ກ໊ອກນໍ້າ, ຖັງ ຫຼື ກະຕ່າໃສ່ຂີ້ເຫຍື້ອ ແລະ ຮົ້ວອ້ອມກ໊ອກນໍ້າ, ຮ່ອງລະບາຍນໍ້າ;

11. **ການຂະຫຍາຍລະບົບນໍ້າລິນ** ໝາຍເຖິງ ການຂະຫຍາຍ ຫົວງານ, ລະບົບທໍ່ສົ່ງນໍ້າ, ອ່າງເກັບນໍ້າ, ກ໊ອກນໍ້າສາທາລະນະ ແລະ ກ໊ອກນໍ້າໃນຄົວເຮືອນ.

**ມາດຕາ 4 ຫຼັກການພື້ນຖານການຄຸ້ມຄອງນໍ້າລິນ**

ການຄຸ້ມຄອງນໍ້າລິນປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດ ຫຼັກການລວມສູນເປັນເອກະພາບ;

2. ປະຕິບັດຕາມ ກົດໝາຍ ແລະ ລະບຽບການ;

3. ມີການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນ ພາຍໃນ ແລະຕ່າງປະເທດ;

4. ຮັບປະກັນການຄຸ້ມຄອງໃຫ້ຖືກຕ້ອງຕາມເປົ້າໝາຍ ມີປະສິດທິພາບ, ປະສິດທິຜົນ, ມີຄວາມວ່ອງໄວ,

ທັນເວລາ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ທີ່ພົວພັນກັບລະບົບນ້ຳລິນຢູ່ພາຍໃນແຂວງໄຊຍະບູລີ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນຮ່ວມມືກັບສາກົນ ກ່ຽວກັບວຽກງານຄຸ້ມຄອງນ້ຳລິນໂດຍການແລກປ່ຽນບົດຮຽນ, ຂໍ້ມູນ, ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ການພັດທະນາຊັບພະຍາກອນມະນຸດເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຍົກລະດັບຢ່າງມີປະສິດທິພາບ, ປະສິດທິຜົນ, ເປີດກວ້າງຮັບການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດທີ່ບໍ່ຂັດກັບກົດໝາຍ.

## ໝວດທີ 2
## ການຄຸ້ມຄອງລະບົບນ້ຳລິນ

**ມາດຕາ 7 ລະບົບນ້ຳລິນ**

ລະບົບນ້ຳລິນປະກອບມີ ດັ່ງນີ້:

1. ປ່າແຫຼ່ງນ້ຳ;
2. ຫົວງານ;
3. ລະບົບທໍ່ນ້ຳ;
4. ອ່າງເກັບນ້ຳ;
5. ກ໋ອກນ້ຳສາທາລະນະ;
6. ກ໋ອກນ້ຳຄົວເຮືອນ.

**ມາດຕາ 8 ການຄຸ້ມຄອງລະບົບນ້ຳລິນ**

ການຄຸ້ມຄອງລະບົບນ້ຳລິນມີ ດັ່ງນີ້:

1. ການຄຸ້ມຄອງປ່າແຫຼ່ງນ້ຳ ແມ່ນ ການປົກປັກຮັກສາປ່າແຫຼ່ງນ້ຳໂດຍມີການກຳນົດຂອບເຂດ, ມີໃບຢັ້ງຢືນສິດນຳໃຊ້ຈາກພາກສ່ວນທີ່ກ່ຽວຂ້ອງ ໂດຍໃຫ້ມີເນື້ອທີ່ກວມເອົາບໍລິເວນເທິງຫົວງານ ຫ້າ ເຮັກຕາຂຶ້ນໄປ, ທຸກພາກສ່ວນມີໜ້າທີ່ໃນການຄຸ້ມຄອງ, ປົກປັກຮັກສາ, ປູກໄມ້ໃຫ້ເປັນປ່າທີ່ອຸດົມສົມບູນໄປດ້ວຍພັນໄມ້ນາໆຊະນິດປົກຄຸມຕະຫຼອດປີ ສາມາດສະໜອງນ້ຳສະອາດໄດ້ຢ່າງປອດໄພໃຫ້ແກ່ການບໍລິໂພກ, ອຸປະໂພກ ແລະ ເປົ້າໝາຍອື່ນໆຢ່າງພຽງພໍ;

2. ການຄຸ້ມຄອງ ຫົວງານ, ລະບົບທໍ່ນ້ຳ, ອ່າງເກັບນ້ຳ, ສາຍກາບ ແລະ ກ໋ອກນ້ຳສາທາລະນະ ແມ່ນການເອົາໃຈໃສ່ໃນການປ້ອງກັນ, ປົກປັກຮັກສາ, ຕິດຕາມກວດກາ, ອະນາໄມແຕ່ລະໄລຍະໃຫ້ເປັນປົກກະຕິ ແລະສ້ອມແປງກໍລະນີເປ່ເພ;

3. ການປະສານງານ ບຸກຄົນ, ນິຕິບຸກຄົນ ທີ່ດຳເນີນກິດຈະການຢູ່ຂອບເຂດລະບົບນ້ຳລິນເຊັ່ນ: ການກໍ່ສ້າງ

ຊົນລະປະທານ, ເຄຫາສະຖານ, ທັນທາງ, ເຂື່ອນໄຟຟ້າ, ລະບົບສາຍສົ່ງໄຟຟ້າ ແລະ ອື່ນໆ ຕ້ອງໄດ້ປະສານງານກັບຄະນະກໍາມະການແຕ່ລະຂັ້ນ ເພື່ອຫຼີກລ້ຽງຜົນກະທົບຕໍ່ລະບົບນໍ້າລິນ;

4. ການຄຸ້ມຄອງຄຸນນະພາບນໍ້າ ບຸກຄົນ, ນິຕິບຸກຄົນ ອົງການ, ທີ່ດໍາເນີນກິດຈະການທີ່ກ່ຽວຂ້ອງກັບນໍ້າລິນ ຫຼື ຈັດຫາລະບົບນໍ້າລິນ ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງການຄຸ້ມຄອງມາດຕະຖານຄຸນນະພາບນໍ້າດື່ມ-ນໍ້າໃຊ້ ຂອງລັດຖະມົນຕີກະຊວງສາທາລະນະສຸກ ສະບັບເລກທີ 561/ສທ, ລົງວັນທີ 27 ກຸມພາ 2014;

5. ໃນກໍລະນີ ມີຜູ້ໃຫ້ທຶນໃນການກໍ່ສ້າງນໍ້າລິນ ກໍໃຫ້ປະຕິບັດຕາມນະໂຍບາຍຂອງຜູ້ໃຫ້ທຶນ, ແຕ່ສໍາເລັດແລ້ວກໍມອບໃຫ້ຊົມໃຊ້. ສໍາລັບ ການຄຸ້ມຄອງນໍ້າລິນ ແມ່ນຕ້ອງປະຕິບັດຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 9 ການກໍ່ສ້າງ ແລະ ຂະຫຍາຍລະບົບນໍ້າລິນ**

ການກໍ່ສ້າງ ແລະ ຂະຫຍາຍລະບົບນໍ້າລິນ ຕ້ອງປະຕິບັດ ດັ່ງນີ້:

1. ການກໍ່ສ້າງລະບົບນໍ້າລິນ ໃຫ້ປະຕິບັດຕາມຄູ່ມືການຈັດຫານໍ້າສະອາດ ຂອງສູນນໍ້າສະອາດ ແລະ ອະນາໄມສິ່ງແວດລ້ອມ ທີ່ໄດ້ກໍານົດໄວ້;

2. ການຂະຫຍາຍລະບົບນໍ້າລິນ ແລະ ການພັດທະນາລະບົບນໍ້າລິນໃຫ້ເປັນລະບົບນໍ້າປະປາຊຸມຊົນ ຕ້ອງໄດ້ຜ່ານການສໍາຫຼວດ-ອອກແບບ, ຄິດໄລ່ຈາກວິຊາການທີ່ກ່ຽວຂ້ອງ ແລະ ຜ່ານການເຫັນດີເປັນເອກະພາບຈາກຄະນະກໍາມະການຄຸ້ມຄອງແຕ່ລະຂັ້ນ.

## ໝວດທີ 3
## ການປະຕິບັດພັນທະ ແລະ ການປະກອບສ່ວນ

**ມາດຕາ 10 ການປະຕິບັດພັນທະ**

ການປະຕິບັດພັນທະຂອງປະຊາຊົນພາຍໃນບ້ານທີ່ຊົມໃຊ້ນໍ້າລິນ ປະກອບມີ:

1. ຄອບຄົວ ທີ່ຊົມໃຊ້ນໍ້າລິນ ຕ້ອງປະຕິບັດພັນທະ 5,000 ກີບ (ສອງພັນກີບ) ຕໍ່ຄອບຄົວ ຕໍ່ເດືອນ;

2. ຄອບຄົວ ທີ່ບໍ່ໄດ້ຊົມໃຊ້ນໍ້າລິນ, ແຕ່ຊົມໃຊ້ນໍ້າຈາກແຫຼ່ງອື່ນໆ ເຊັ່ນ: ນໍ້າບາດານ, ນໍ້າສ້າງ ຕ້ອງປະກອບພັນທະຊ່ວຍ 3,000 ກີບ (ສາມພັນກີບ) ຕໍ່ຄອບຄົວຕໍ່ເດືອນ;

3. ບຸກຄົນ, ນິຕິບຸກຄົນ, ຄອບຄົວ ແລະ ຜູ້ປະກອບການອື່ນໆ ທີ່ຊົມໃຊ້ນໍ້າລິນເຂົ້າໃນກິດຈະການ ເຊັ່ນ: ໂຮງງານນໍ້າດື່ມ, ໂຮງງານນໍ້າກ້ອນ, ຮ້ານອາຫານ, ຮ້ານກິນດື່ມ, ຕົ້ມເຫຼົ້າ ແລະ ອື່ນໆ ຕ້ອງໄດ້ຕິດຕັ້ງໝໍ້ວັດແທກນໍ້າດ້ວຍຕົນເອງ ໂດຍໄດ້ຮັບອະນຸຍາດ ຈາກຄະນະກໍາມະການຄຸ້ມຄອງນໍ້າລິນແຕ່ລະຂັ້ນ ແລະ ປະຕິບັດພັນທະ 1,000 ກີບ (ໜຶ່ງພັນກີບ) ຕໍ່ ໜຶ່ງແມັດກ້ອນ;

4. ສໍາລັບຄອບຄົວທຸກຍາກ, ໂຮງໝໍນ້ອຍ ຫຼື ສຸກສາລາ, ຫ້ອງການບ້ານ, ວັດ ແລະ ໂຮງຮຽນ ແມ່ນຍົກເວັ້ນ ແຕ່ຕ້ອງໄດ້ຮັບການຢັ້ງຢືນ ແລະ ເຫັນດີຈາກການຈັດຕັ້ງບ້ານ.

**ມາດຕາ 11 ການປະກອບສ່ວນ**

ການປະກອບສ່ວນໄດ້ຈາກພາກສ່ວນ ດັ່ງນີ້:

1. ງົບປະມານຂອງລັດ;
2. ບຸກຄົນ, ນິຕິບຸກຄົນ, ບໍລິສັດລັດວິສາຫະກິດ ແລະ ອົງການຈັດຕັ້ງສັງຄົມ ແລະ ສາກົນ;
3. ລາຍຮັບອື່ນໆ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 12 ການຄຸ້ມຄອງງົບປະມານ**

ການຄຸ້ມຄອງງົບປະມານປະຕິບັດ ດັ່ງນີ້:

1. ກອງເລຂາຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນບ້ານ ຄຸ້ມຄອງດ້ວຍການເກັບເງິນພັນທະຂອງປະຊາຊົນ ແລະ ການປະກອບສ່ວນຂອງສັງຄົມ ແລ້ວແບ່ງເຂົ້າຄັງເງິນຂອງບ້ານ ແປດສິບສ່ວນຮ້ອຍ (80%) ແລະ ມອບເງິນຊາວສ່ວນຮ້ອຍ (20%) ໃຫ້ກອງເລຂາຂັ້ນເມືອງ ເພື່ອຝາກໄວ້ຄັງເງິນປະຈຳເມືອງ ສິບສ່ວນຮ້ອຍ (10%) ແລະ ມອບຕໍ່ໃຫ້ກອງເລຂາຂັ້ນແຂວງ ເພື່ອຝາກໄວ້ຄັງເງິນປະຈຳແຂວງ ສິບສ່ວນຮ້ອຍ (10%);

2. ຄະນະກຳມະການ ແລະ ກອງເລຂາຄຸ້ມຄອງນ້ຳລິນຂັ້ນບ້ານ ເກັບກຳສະຖິຕິຈຳນວນພົນ ພາຍໃນບ້ານຂອງຕົນ, ສ້າງແຜນລາຍຮັບ-ລາຍຈ່າຍໂດຍໃຫ້ແບ່ງເປັນ ສີ່ ງວດຕໍ່ປີ ຊຶ່ງງວດທີ ໜຶ່ງ ແຕ່ວັນທີ 1 ຫາ 30 ມີນາ; ງວດທີ ສອງ ແຕ່ ວັນທີ 1 ຫາ 30 ມິຖຸນາ; ງວດທີ ສາມ ແຕ່ວັນທີ 1 ຫາ 30 ກັນຍາ ແລະ ງວດທີ ສີ່ ແຕ່ວັນທີ 1 ຫາ 30 ທັນວາ ຂອງແຕ່ລະປີ.

**ມາດຕາ 13 ເປົ້າໝາຍ ແລະ ການນຳໃຊ້ງົບປະມານ**

**1. ເປົ້າໝາຍການນຳໃຊ້ງົບປະມານຢູ່ຂັ້ນແຂວງ**

1) ຄະນະກຳມະການຄຸ້ມຄອງຂັ້ນແຂວງ ນຳໃຊ້ເຂົ້າຢູ່ໃນວຽກງານບໍລິຫານຄຸ້ມຄອງ, ຕິດຕາມຊຸກຍູ້ວຽກງານນ້ຳລິນຢູ່ຂັ້ນເມືອງ ແລະ ບ້ານ;

2) ຈັດຝຶກອົບຮົມ ກ່ຽວກັບວຽກງານນ້ຳລິນຂັ້ນເມືອງ ແລະ ຂັ້ນບ້ານ;

**2. ເປົ້າໝາຍການນຳໃຊ້ງົບປະມານຢູ່ຂັ້ນເມືອງ**

1) ຄະນະກຳມະການຄຸ້ມຄອງຂັ້ນແຂວງ ນຳໃຊ້ເຂົ້າຢູ່ໃນວຽກງານບໍລິຫານຄຸ້ມຄອງ, ຕິດຕາມຊຸກຍູ້, ຈັດກອງປະຊຸມວຽກງານນ້ຳລິນຢູ່ຂັ້ນບ້ານ;

2) ຝຶກອົບຮົມສ້າງຄວາມເຂັ້ມແຂງ ກ່ຽວກັບການຄຸ້ມຄອງລະບົບນ້ຳລິນໃຫ້ຄະນະກຳມະການຂັ້ນເມືອງ ແລະ ຂັ້ນບ້ານ;

3) ນຳໃຊ້ຈັດກອງປະຊຸມແລກປ່ຽນບົດຮຽນ ກ່ຽວກັບການຄຸ້ມລະບົບນ້ຳລິນ.

**3. ເປົ້າໝາຍການນຳໃຊ້ງົບປະມານຢູ່ຂັ້ນບ້ານ**

1) ນຳໃຊ້ເຂົ້າໃນວຽກງານບໍລິຫານຄຸ້ມຄອງ, ເປັນຄ່າແຮງງານຂອງຜູ້ເກັບເງິນ;

2) ນຳໃຊ້ຊື້ອຸປະກອນໃນເວລາມີການກໍ່ສ້າງ ແລະ ສ້ອມແປງ ຕໍ່ເຕີມ ຫຼື ຂະຫຍາຍລະບົບນ້ຳລິນ ເຊັ່ນ: ຊື້ກ໋ອກນ້ຳ, ທໍ່ນ້ຳ, ຂໍ້ຕໍ່, ກາວ, ເທບຄຽນ, ປູນຊີມັງ, ຫີນແຮ່, ຊາຍ, ເຫຼັກຕະປູ, ເຫຼັກເສັ້ນ, ລວດມັດ ແລະ ອື່ນໆ;

3) ນຳໃຊ້ເປັນຄ່າແຮງງານຂອງກຳມະກອນ.

**ມາດຕາ 14 ການອະນຸມັດງົບປະມານ**

ການອະນຸມັດງົບປະມານ ເພື່ອນຳໃຊ້ເຂົ້າວຽກງານນ້ຳລິນ ຕ້ອງປະຕິບັດ ດັ່ງນີ້:

1. ຫົວໜ້າຄະນະກຳມະການຄຸ້ມຄອງຂັ້ນແຂວງ ເປັນຜູ້ອະນຸມັດງົບປະມານຈາກຄັງເງິນປະຈຳແຂວງ ຕາມການຂຶ້ນແຜນ ສະເໜີຂອງກອງເລຂາຂັ້ນແຂວງ ເພື່ອນຳໃຊ້ເຂົ້າໃນແຜນກິດຈະກຳທີ່ໄດ້ລະບຸໄວ້ໃນ ຂໍ້ 1 ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;

2. ຫົວໜ້າຄະນະກໍາມະການຄຸ້ມຄອງຂັ້ນເມືອງ ເປັນຜູ້ອະນຸມັດງົບປະມານຈາກຄັງເງິນປະຈໍາເມືອງ ຕາມການຂຶ້ນແຜນ ສະເໜີຂອງກອງເລຂາຂັ້ນເມືອງ ເພື່ອນໍາໃຊ້ເຂົ້າໃນແຜນກິດຈະກໍາທີ່ໄດ້ລະບຸໄວ້ໃນ ຂໍ້ 2 ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;

3. ຫົວໜ້າຄະນະກໍາມະການຄຸ້ມຄອງຂັ້ນບ້ານ ເປັນຜູ້ອະນຸມັດງົບປະມານຈາກຄັງເງິນລວມບ້ານ ຕາມການຂຶ້ນແຜນ ສະເໜີຂອງກອງເລຂາຂັ້ນບ້ານ ເພື່ອນໍາໃຊ້ເຂົ້າໃນແຜນກິດຈະກໍາທີ່ໄດ້ລະບຸໄວ້ໃນ ຂໍ້ 3 ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ອົງການຄຸ້ມຄອງນໍ້າລິນ

### ມາດຕາ 15 ອົງການຄຸ້ມຄອງນໍ້າລິນ

ອົງການຄຸ້ມຄອງນໍ້າລິນ ເປັນຄວາມຮັບຜິດຊອບຂອງຄະນະກໍາມະການຄຸ້ມຄອງນໍ້າລິນ, ອົງການປົກຄອງທ້ອງຖິ່ນ, ຂະແໜງການສາທາລະນະສຸກ.

### ມາດຕາ 16 ຄະນະກໍາມະການຄຸ້ມຄອງນໍ້າລິນຂັ້ນແຂວງ

ຄະນະກໍາມະການຄຸ້ມຄອງລິນຂັ້ນແຂວງ ປະກອບມີ:

1. ທ່ານ ຮອງເຈົ້າແຂວງ ຜູ້ຊີ້ນໍາວຽກງານຂົງເຂດວັດທະນະທໍາ - ສັງຄົມ ເປັນຫົວໜ້າ;
2. ທ່ານ ຫົວໜ້າພະແນກສາທາລະນະສຸກແຂວງ ເປັນຮອງ;
3. ທ່ານ ຮອງຫົວໜ້າພະແນກການເງິນແຂວງ ເປັນຄະນະ;
4. ທ່ານ ຮອງຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ແຂວງ ເປັນຄະນະ;
5. ທ່ານ ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ເປັນຄະນະ;
6. ທ່ານ ຮອງຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນຄະນະ;
7. ທ່ານ ຮອງປະທານແນວລາວສ້າງຊາດແຂວງ ເປັນຄະນະ;
8. ທ່ານ ຮອງເລຂາຄະນະບໍລິຫານງານຊາວໜຸ່ມແຂວງ ເປັນຄະນະ;
9. ທ່ານ ຮອງຫົວໜ້າອົງການກາແດງແຂວງ ເປັນຄະນະ;
10. ທ່ານ ຮອງປະທານ ສະຫະພັນແມ່ຍິງແຂວງ ເປັນຄະນະ.

### ມາດຕາ 17 ສິດ ແລະ ໜ້າທີ່ຂອງຄະນະການະການຄຸ້ມຄອງນໍ້າລິນຂັ້ນແຂວງ

ຄະນະກໍາມະການຄຸ້ມຄອງນໍ້າລິນຂັ້ນແຂວງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ວາງແຜນຄຸ້ມຄອງນໍ້າລິນ ໃນແຕ່ລະໄລຍະ;
2. ສ້າງແຜນໃນການຄຸ້ມຄອງວຽກງານນໍ້າລິນ ໃນແຕ່ລະຂັ້ນ;
3. ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ວຽກງານນໍ້າລິນຂອງແຕ່ລະຂັ້ນ ໃນແຕ່ລະໄລຍະ
4. ຈັດກອງປະຊຸມປຶກສາຫາລືແກ້ໄຂວຽກງານນໍ້າລິນເປັນແຕ່ລະໄລຍະ;
5. ພົວພັນຮ່ວມມືກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດຕາມແນວທາງຂອງພັກ;
6. ສະຫຼຸບລາຍງານ ຕໍ່ຂັ້ນເທິງ.

**ມາດຕາ 18 ຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນເມືອງ**

ຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນເມືອງ ປະກອບມີ:

| | |
|---|---|
| 1. ທ່ານ ຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ - ສັງຄົມ | ເປັນຫົວໜ້າ; |
| 2. ທ່ານ ຫົວໜ້າຫ້ອງການສາທາລະນະສຸກເມືອງ | ເປັນຮອງ; |
| 3. ທ່ານ ຮອງຫົວໜ້າຫ້ອງການ - ການເງິນເມືອງ | ເປັນຄະນະ; |
| 4. ທ່ານ ຮອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ | ເປັນຄະນະ; |
| 5. ທ່ານ ຮອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ | ເປັນຄະນະ; |
| 6. ທ່ານ ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ | ເປັນຄະນະ; |
| 7. ທ່ານ ຮອງປະທານແນວລາວສ້າງຊາດເມືອງ | ເປັນຄະນະ; |
| 8. ທ່ານ ຮອງເລຂາຄະນະບໍລິຫານງານຊາວໜຸ່ມເມືອງ | ເປັນຄະນະ; |
| 9. ທ່ານ ຮອງປະທານ ສະຫະພັນແມ່ຍິງເມືອງ | ເປັນຄະນະ; |
| 10. ທ່ານ ຮອງຫົວໜ້າຫ້ອງການກາແດງເມືອງ (ສຳລັບເມືອງທີ່ມີຫ້ອງການກາແດງ) | ເປັນຄະນະ; |
| 11. ທ່ານ ຫົວໜ້າໂຮງໝໍນ້ອຍ (ເຂດບ້ານທີ່ມີນ້ຳລິນ) | ເປັນຄະນະ. |

**ມາດຕາ 19 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນເມືອງ**

ຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນເມືອງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດແຜນຄຸ້ມຄອງນ້ຳລິນໃນແຕ່ລະໄລຍະ;
2. ສ້າງແຜນໃນການຄຸ້ມຄອງວຽກງານນ້ຳລິນຂັ້ນເມືອງ ແລະ ຂັ້ນບ້ານ;
3. ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ວຽກງານນ້ຳລິນຂັ້ນບ້ານໃນແຕ່ລະໄລຍະ;
4. ຈັດກອງປະຊຸມປຶກສາຫາລືແກ້ໄຂວຽກງານນ້ຳລິນເປັນແຕ່ລະໄລຍະ;
5. ສະຫຼຸບລາຍງານ ຕໍ່ຂັ້ນເທິງ.

**ມາດຕາ 20 ຄະນະກຳມະການຄຸ້ມຄອງນ້ຳລິນ ຂັ້ນບ້ານ**

ຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນບ້ານ ປະກອບມີ:

| | |
|---|---|
| 1. ທ່ານ ນາຍບ້ານ | ເປັນຫົວໜ້າ; |
| 2. ທ່ານ ຜູ້ຮັບຜິດຊອບວຽກງານ ສາທາລະນະສຸກຂັ້ນບ້ານ | ເປັນຮອງ; |
| 3. ທ່ານ ຜູ້ຮັບຜິດຊອບວຽກງານ ການເງິນບ້ານ | ເປັນຄະນະ; |
| 4. ທ່ານ ປະທານແນວໂຮມບ້ານ | ເປັນຄະນະ; |
| 5. ທ່ານ ຜູ້ຮັບຜິດຊອບວຽກງານ ໂຍທາທິການບ້ານ | ເປັນຄະນະ; |
| 6. ທ່ານ ຜູ້ຮັບຜິດຊອບວຽກງານ ກະສິກຳ ແລະ ປ່າມໄມ້ ບ້ານ | ເປັນຄະນະ; |
| 7. ທ່ານ ຜູ້ຮັບຜິດຊອບວຽກງານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມບ້ານ | ເປັນຄະນະ; |
| 8. ທ່ານ ຜູ້ຮັບຜິດຊອບວຽກງານ ຊາວໜຸ່ມບ້ານ | ເປັນຄະນະ; |
| 9. ທ່ານ ປະທານສະຫະພັນແມ່ຍິງບ້ານ | ເປັນຄະນະ. |

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງນ້ຳລິນ ຂັ້ນບ້ານ**

ຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບເງິນການປະກອບສ່ວນ ແລະ ເງິນພັນທະໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;

2. ຄຸ້ມຄອງ ແລະ ນຳໃຊ້ງົບປະມານເຂົ້າໃນການປົກປັກຮັກສາ, ບຳລຸງ, ສ້ອມແປງ, ຕໍ່ເຕີມ ແລະ ຂະຫຍາຍລະບົບນ້ຳລິນ;

3. ຕິດຕາມກວດກາ, ຮັກສາອະນາໄມລະບົບນ້ຳລິນ;

4. ສະຫຼຸບ, ສັງລວມລາຍຮັບ-ຈ່າຍ, ແຜນໃຊ້ຈ່າຍສະເໜີ ຫຼື ລາຍງານຄະນະກຳມະການຂັ້ນເມືອງ.

### ມາດຕາ 22 ກອງເລຂາຄະນະກຳມະການຄຸ້ມຄອງນ້ຳລິນ

ກອງເລຂາຄະນະກຳມະການຄຸ້ມຄອງນ້ຳລິນແຕ່ລະຂັ້ນ ຊຶ່ງມາຈາກຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ, ຂັ້ນແຂວງ ແລະ ຂັ້ນເມືອງປະຈຳຢູ່ຂະແໜງການສາທາລະນະສຸກ, ຂັ້ນບ້ານ ປະຈຳຢູ່ບ້ານ ຊຶ່ງເຮັດໜ້າທີ່ເປັນກອງເລຂາໃຫ້ແຕ່ລະຂັ້ນ.

### ມາດຕາ 23 ກອງເລຂາຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນແຂວງ

ກອງເລຂາຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນແຂວງ ປະກອບມີ:

1. ທ່ານ ຮອງຫົວໜ້າພະແນກສາທາລະນະສຸກແຂວງ ເປັນຫົວໜ້າ;
2. ທ່ານ ຮອງຫົວໜ້າຄັງເງິນປະຈຳແຂວງ ເປັນຮອງ;
3. ທ່ານ ຮອງຫົວໜ້າຂະແໜງອະນາໄມ ແລະ ສົ່ງເສີມສຸຂະພາບ ພະແນກສາທາລະນະສຸກແຂວງ ເປັນຄະນະ;
4. ທ່ານ ຮອງຫົວໜ້າຂະແໜງບໍລິຫານ, ແຜນການ ແລະ ການເງິນ ພະແນກສາທາລະນະສຸກແຂວງ ເປັນຄະນະ;
5. ທ່ານ ພະນັກງານ ວິຊາການຂະແໜງອະນາໄມ ແລະ ສົ່ງເສີມສຸຂະພາບ ພະແນກສາທາລະນະສຸກແຂວງ ເປັນຄະນະ;
6. ທ່ານ ພະນັກງານ ວິຊາການຂະແໜງບໍລິຫານ, ແຜນການ ແລະ ການເງິນ ພະແນກສາທາລະນະສຸກແຂວງ ເປັນຄະນະ.

### ມາດຕາ 24 ສິດ ແລະ ໜ້າທີ່ຂອງກອງເລຂາຂັ້ນແຂວງ

ກອງເລຂາຂັ້ນແຂວງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍຄະນະກຳມະການຂັ້ນແຂວງໃນການວາງແຜນຄຸ້ມຄອງນ້ຳລິນໃນແຕ່ລະໄລຍະ;
2. ຊ່ວຍໃນການສ້າງແຜນໃນການຄຸ້ມຄອງວຽກງານນ້ຳລິນໃນແຕ່ລະຂັ້ນ;
3. ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ວຽກງານນ້ຳລິນຂອງແຕ່ລະຂັ້ນ ໃນແຕ່ລະໄລຍະ;
4. ກະກຽມຈັດກອງປະຊຸມປຶກສາຫາລືແກ້ໄຂວຽກງານນ້ຳລິນເປັນແຕ່ລະໄລຍະ;
5. ສຳຫຼວດ, ອອກແບບ ແລະ ຄິດໄລ່ ການຕໍ່ເຕີມ ຫຼື ສ້າງລະບົບນ້ຳລິນໃໝ່;
6. ສ້າງແຜນພົວພັນຮ່ວມມືກັບອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ;
7. ສະຫຼຸບລາຍງານ ຕໍ່ຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນແຂວງ;
8. ປະຕິບັດ ສິດ ແລະ ໜ້າທີ່ ອື່ນໆ.

**ມາດຕາ 25 ກອງເລຂາຄະນະກຳມະການຄຸ້ມຄອງນ້ຳລິນຂັ້ນເມືອງ**

ກອງເລຂາຂັ້ນເມືອງ ປະກອບມີ:

1. ທ່ານ ຮອງຫົວໜ້າຫ້ອງການສາທາລະນະສຸກເມືອງ ເປັນຫົວໜ້າ;
2. ທ່ານ ຮອງຫົວໜ້າຄັງເງິນປະຈຳເມືອງ ເປັນຮອງ;
3. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າໜ່ວຍງານອະນາໄມ ແລະ ສົ່ງເສີມສຸຂະພາບ ຫ້ອງການສາທາລະນະສຸກ ເມືອງ ເປັນຄະນະ;
4. ທ່ານ ຜູ້ຕາງໜ້າໜ່ວຍງານບໍລິຫານ - ການເງິນ ຂອງຫ້ອງການສາທາລະນະສຸກເມືອງ ເປັນຄະນະ;
5. ທ່ານ ຜູ້ຕາງໜ້າໜ່ວຍງານອະນາໄມ ແລະ ສົ່ງເສີມສຸຂະພາບ ຂອງຫ້ອງການສາທາລະນະສຸກເມືອງ ເປັນຄະນະ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງກອງເລຂາຂັ້ນເມືອງ**

ກອງເລຂາຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຂໍນຳໃຊ້ງົບປະມານໃນການຈັດຕັ້ງປະຕິບັດກິດຈະກຳຕາມແຜນການທີ່ສະເໜີ;
2. ຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະການ ແລະ ກອງເລຂາຄຸ້ມຄອງນ້ຳລິນຂັ້ນບ້ານ;
3. ສ້າງແຜນລາຍຮັບ-ຈ່າຍ ວຽກງານນ້ຳລິນ ເປັນແຕ່ລະໄລຍະ;
4. ສ້າງແຜນລົງຕິດຕາມຊຸກຍູ້, ສ້າງເງື່ອນໄຂໃຫ້ຂັ້ນບ້ານມີການເຄື່ອນໄຫວວຽກງານດັ່ງກ່າວ;
5. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆ.

**ມາດຕາ 27 ກອງເລຂາຂັ້ນບ້ານ**

ກອງເລຂາຂັ້ນບ້ານ ປະກອບ ມີ:

1. ທ່ານ ຜູ້ຮັບຜິດຊອບວຽກງານສາທາລະນະສຸກຂັ້ນບ້ານ ເປັນຫົວໜ້າ;
2. ທ່ານ ຜູ້ຮັບຜິດຊອບວຽກງານການເງິນບ້ານ ເປັນຮອງ;
3. ທ່ານ ຜູ້ຮັບຜິດຊອບວຽກງານສະຫະພັນແມ່ຍິງບ້ານ ເປັນຄະນະ;
4. ທ່ານ ຜູ້ຮັບຜິດຊອບວຽກງານຊາວໜຸ່ມບ້ານ ເປັນຄະນະ;
5. ທ່ານ ຜູ້ຮັບຜິດຊອບ ປກສ ບ້ານ ເປັນຄະນະ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງກອງເລຂາຂັ້ນບ້ານ**

ກອງເລຂາຂັ້ນບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບລາຍຮັບຈາກການປະກອບສ່ວນພັນທະໃຫ້ຖືກຕ້ອງ, ຄົບຖ້ວນ ແລ້ວມອບເຂົ້າຄັງເງິນລວມຂອງບ້ານ;
2. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ;
3. ປົກປັກຮັກສາ, ບຳລຸງ, ສ້ອມແປງ, ຕໍ່ເຕີມ ແລະ ຂະຫຍາຍລະບົບນ້ຳລິນ;
4. ຕິດຕາມກວດກາ ອະນາໄມລະບົບນ້ຳລິນ;
5. ສະຫຼຸບ, ສັງລວມລາຍຮັບ-ຈ່າຍ, ລາຍງານໃຫ້ຄະນະກຳມະການ ແລະ ກອງເລຂາຂັ້ນເມືອງ;
6. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆ.

## ໝວດທີ 5
## ລະບອບປະຊຸມ ແລະ ການລາຍງານ

**ມາດຕາ 29 ລະບອບປະຊຸມ**

ກອງປະຊຸມຄະນະກຳມະການຄຸ້ມຄອງນ້ຳລີນ ຈັດຂຶ້ນ ໜຶ່ງ ຄັ້ງຕໍ່ປີ, ກໍລະນີ ມີບັນຫາທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາ ສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ຕາມການສະເໜີຂອງຫົວໜ້າຄະນະກຳມະການຄຸ້ມຄອງນ້ຳລີນແຕ່ລະຂັ້ນ, ກອງປະຊຸມຈະເປີດຂຶ້ນໄດ້ກໍຕໍ່ເມື່ອ ມີຈຳນວນຄະນະກຳມະການ ເຂົ້າຮ່ວມສອງສ່ວນສາມຂຶ້ນໄປ.

**ມາດຕາ 30 ການລາຍງານ**

ການລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງນ້ຳລີນ ໃຫ້ຄະນະກຳມະການ ແລະ ກອງເລຂາແຕ່ລະຂັ້ນ ລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງ ເປັນປະຈຳ ຫົກ ເດືອນ ແລະ ປະຈຳປີ.

## ໝວດທີ 6
## ອົງການກວດກາ

**ມາດຕາ 31 ອົງການກວດກາ**

ອົງການກວດກາວຽກງານນ້ຳລີນ ປະກອບ ມີ:

1. ການກວດກາພາຍໃນ: ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງລະບົບນ້ຳລີນ;
2. ອົງການກວດກາພາຍນອກ: ມີອົງການກວດສອບພາກເໜືອ, ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 32 ເນື້ອໃນການກວດກາ**

ເນື້ອໃນການກວດກາວຽກງານຄຸ້ມຄອງນ້ຳລີນ ມີ:

1. ການຈັດຕັ້ງປະຕິບັດຫຼັກການ ແລະ ລະບຽບການຄຸ້ມຄອງລະບົບນ້ຳລີນ;
2. ການຄຸ້ມຄອງລາຍຮັບ-ລາຍຈ່າຍ;
3. ກວດກາເຕັກນິກການຄຸ້ມຄອງ-ນຳໃຊ້ລະບົບນ້ຳລີນ;
4. ການຈັດຕັ້ງປະຕິບັດວຽກງານຄະນະກຳມະການ ແລະ ກອງເລຂາຄຸ້ມຄອງລະບົບນ້ຳລີນແຕ່ລະຂັ້ນ;
5. ຂະແໜງການອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 33 ຮູບການກວດກາ**

ຮູບການກວດກາ ການຄຸ້ມຄອງລະບົບນ້ຳລີນ ມີ:

1. ກວດກາປົກກະຕິ ແມ່ນການກວດກາຕາມແຜນການເປັນປະຈຳ ແລະ ກຳນົດເວລາທີ່ແນ່ນອນ;
2. ກວດການອກແຜນໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;
3. ກວດກາແບບສຸກເສີນ ແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 34 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍສະນາໃສ່ຮ້າຍປ້າຍສີ, ທຳລາຍລະບົບນ້ຳລິນ, ບໍລິເວນປ່າ ແຫຼ່ງນ້ຳທຸກຮູບແບບ ເຊັ່ນ: ການຜະລິດກະສິກຳ, ອຸດສາຫະກຳ, ກໍ່ສ້າງເຄຫາສະຖານ, ຕາຂ່າຍໄຟຟ້າ ແລະ ລະບົບ ສາຍສົ່ງ, ນຳໃຊ້ສານເຄມີ, ບ່ອນລ້ຽງສັດ ແລະ ອື່ນໆ.

### ມາດຕາ 35 ຂໍ້ຫ້າມສຳລັບ ຄະນະກຳມະການ ແລະ ກອງເລຂາຄຸ້ມຄອງວຽກງານນ້ຳລິນແຕ່ລະຂັ້ນ

ຫ້າມຄະນະກຳມະການ ແລະ ກອງເລຂາຄຸ້ມຄອງວຽກງານນ້ຳລິນແຕ່ລະຂັ້ນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ ແລະ ໜ້າທີ່ຕຳແໜ່ງ, ຄວາມຮັບຜິດຊອບບັງຄັບນາບຂູ່, ອຳນວຍຄວາມສະດວກເພື່ອຜົນ ປະໂຫຍດສ່ວນຕົວ, ຄອບຄົວ ແລະ ຍາດພີ່ນ້ອງ;
2. ທວງເອົາ, ຂໍເອົາ, ຮັບສິນບົນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ກົດໜ່ວງ, ຖ່ວງດຶງເອກະສານກ່ຽວກັບວຽກງານນ້ຳລິນ;
4. ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
5. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ການຮ່ວມມືຕໍ່ວຽກງານຄຸ້ມຄອງລະບົບນ້ຳລິນ.

### ມາດຕາ 36 ຂໍ້ຫ້າມສຳລັບ ຜູ້ຊົມໃຊ້ນ້ຳ

ຫ້າມຜູ້ຊົມໃຊ້ນ້ຳລິນ ມີພຶດຕິກຳ ດັ່ງນີ້:

1. ຕັດທໍ່, ຕໍ່ທ່ອກນ້ຳລິນເຂົ້າເຮືອນຕົນເອງ ຫຼື ສຳນັກງານ, ອົງການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ຄະນະກຳມະການຄຸ້ມຄອງລະບົບນ້ຳລິນຢ່າງເດັດຂາດ;
2. ນຳໃຊ້ນ້ຳລິນແບບຟຸມເຟືອຍ;
3. ນຳໃຊ້ອຸປະກອນນ້ຳລິນ ບໍ່ໄດ້ຮັບອະນຸຍາດ ຈາກຄະນະກຳມະການຄຸ້ມຄອງລະບົບນ້ຳລິນ;
4. ຜູ້ປະກອບການອື່ນໆ ທີ່ຊົມໃຊ້ນ້ຳລິນເຂົ້າໃນກິດຈະການເຊັ່ນ: ໂຮງງານນ້ຳດື່ມ, ໂຮງງານນ້ຳກ້ອນ, ຮ້ານອາຫານ, ຮ້ານກິນດື່ມ, ຕົ້ມເຫຼົ້າ ແລະ ເປົ້າໝາຍອື່ນໆທີ່ບໍ່ໄດ້ຮັບອະນຸຍາດ ຈາກຄະນະກຳມະການຄຸ້ມ ຄອງນ້ຳລິນແຕ່ລະຂັ້ນ;
5. ນຳໃຊ້ນ້ຳເຂົ້າເປົ້າໝາຍອື່ນທີ່ບໍ່ໄດ້ຮັບອະນຸຍາດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 37 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນເຂົ້າໃນການຄຸ້ມຄອງລະບົບນ້ຳລິນ ຈະໄດ້ຮັບ ການຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 38 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ທີ່ສ້າງຄວາມເສຍຫາຍຕໍ່ລະບົບນ້ຳລິນ ເຊັ່ນ: ເຈາະ, ຟັນ, ທັບທໍ່ນ້ຳລິນ ຫຼື ລະເມີດຂໍ້ຫ້າມ ໃນມາດຕາ 34 ຂອງຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ທົດແທນຄ່າເສຍຫາຍ ແລະ ປະຕິບັດວິໄນຕາມລະບຽບການ;

ສຳລັບ ຄະນະກຳມະການ, ກອງເລຂາຄຸ້ມຄອງນ້ຳລິນແຕ່ລະຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງນຳໃຊ້ງົບປະມານ ແລະ ວັດຖຸອຸປະກອນບໍ່ຖືກເປົ້າໝາຍ ຈະຖືກດຳເນີນຄະດີອາຍາ ຕາມກໍລະນີ ໜັກ ຫຼື ເບົາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 39 ການຈັດຕັ້ງປະຕິບັດ**

ມອບໃຫ້ຂະແໜງສາທາລະນະສຸກ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ອົງການປົກຄອງ, ບ້ານທີ່ຊົມໃຊ້ນ້ຳລິນພາຍໃນແຂວງ ໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ, ທົ່ວເຖິງ; ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ເຂັ້ມງວດ ແລະ ໄດ້ຮັບຜົນດີ.

**ມາດຕາ 40 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 05 ຕຸລາ 2023 ແລະ ພາຍຫຼັງລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງ**

ແຂວງໄຊຍະບູລີ
ເຈົ້າແຂວງ

ພົງສະຫວັນ ສິດທະວົງ